UNFPA



ວາລະການພັດທະນາແບບຍືນຍົງ ຮອດປີ 2030 ມີຈຸດປະສົງເພື່ອ ຮັບປະກັນການພັດທະນາທີ່ມີ ຄວາມເທົ່າທຽມ ແລະ ມີສ່ວນ ຮ່ວມຂອງທຸກຄົນ ໂດຍບໍ່ປ່ອຍ ປະຜູ້ໃດໄວ້ຂ້າງຫຼັງ.

ນີ້ແມ່ນແຜນງານໄລຍະ 15 ປີ ທີ່ແນໃສ່ການພັດທະນາອະນາຄົດ ຂອງເດັກຍິງອາຍຸ 10 ປີ ເຊິ່ງຜ່ານ ມາພວກເຂົາຖືກປ່ອຍປະໄວ້ ຂ້າງຫຼັງ.

# ນ້ອຍ ເດັກຍິງໄວໜຸ່ມ ຂອງ ສປປ ລາວ

ພະຈິກ 2020

# ນາງນ້ອຍແມ່ນໃຜ?



- ນາງນ້ອຍ ເປັນຕົວແທນໃຫ້ເດັກຍິງ ທີ່ມີອາຍຸ 10-19 ປີ ຈຳນວນ 700,230 ຄົນໃນ ສປປ ລາວ. ແຜນງານນາງນ້ອຍ ໄດ້ຮັບການເປີດໂຕ ຄັ້ງທຳອິດ ໃນວັນເດັກຍິງສາກົນໃນປີ 2016 ທີ່ຈະມີການຕິດຕາມໃນອີກ 15 ປີ ຂ້າງໜ້າ ຄຽງຄູ່ກັບເປົ້າໝາຍການພັດທະນາແບບຍືນຍົງ ຫຼື SDGs. ນາງນ້ອຍ ໄດ້ເຮັດໃຫ້ເຫັນຮູບປະທຳຂອງຄວາມມຸ້ງໝັ້ນ ໃນການບໍ່ປະໄວໜຸ່ມຍິງໄວ້ທາງຫຼັງຕາມເປົ້າໝາຍ SDGs.
- ນັບຕັ້ງແຕ່ປີ 2016, ນາງນ້ອຍ ແລະ ວັນເດັກຍິງສາກົນ ແມ່ນໄດ້ມີການ ສະເຫຼີມສະຫຼອງປະຈຳປີໂດຍບັນດາກະຊວງ ແລະ ພາກສ່ວນທີ່ກ່ຽວຂ້ອງ
- ຕົວແທນຂອງນາງນ້ອຍ ໄດ້ເປີດການສົນທະນາເພື່ອຍົກສູງສະຕິກ່ຽວກັບ ບັນຫາຂອງໄວໜຸ່ມ, ໂດຍສະເພາະການປະລະການຮຽນ, ການແຕ່ງງານ ແລະ ການຖືພາກ່ອນໄວອັນຄວນ ໃນ ສປປ ລາວ.
- ບັນດາຄູ່ຮ່ວມມື ສປປ ລາວ ສາມາດເພີ່ມການລົງທຶນໃສ່ເດັກຍິງໃນໄວຈະເລີນພັນ ໂດຍຜ່ານການດຳເນີນງານຈາກຫຼາຍພາກສ່ວນດ້ວຍຮູບແບບການຮ່ວມມືຈາກຫຼາຍຝ່າຍ.



## ວິໄສທັດຂອງນາງນ້ອຍປີ 2030

ເມື່ອຮອດປີ 2030, ນາງນ້ອຍແມ່ນຈະໄດ້ຮັບການພັດທະນາຕາມແຕ່ລະ ໄລຍະທີ່ສຳຄັນຂອງຊີວິດ ແລະ ຈະເປັນໄວໜຸ່ມທີ່ສົມບູນເມື່ອຮອດອາຍຸ 25 ປີ. ເມື່ອຮອດປີ 2030, ນາງນ້ອຍ ຈະມີທັກສະຊີວິດທີ່ຈຳເປັນ, ມີສຸຂະພາບດີ, ມີຄວາມຮັບຜິດຊອບ, ສາມາດປະຕິບັດໜ້າທີ່ຂອງຊີວິດ ໃຫ້ສົມບູນ ແລະ ມີຄວາມສາມາດໃນການ:

- ເລືອກຄູ່ຊີວິດ ແລະ ເວລາທີ່ເໝາະສົມໃນການແຕ່ງງານ.
- ເລືອກວ່າ ເມື່ອໃດທີ່ເໝາະສົມວ່າຈະມີລູກ ແລະ ຈະມີລູກຈັກຄົນ.
- ມີຄອບຄົວທີ່ມີສຸຂະພາບແຂງແຮງ.
- ໄດ້ຮັບການສຶກສາ ແລະ ສາມາດຊອກວຽກເຮັດທີ່ດີ.
- ສາມາດປະກອບສ່ວນໃນການພັດທະນາຕົນເອງ, ຊຸມຊົນ, ປະເທດຊາດ ແລະ ສາກົນ.

# ສະຖານະການປະຈຸບັນຂອງໄວໜຸ່ມຍິງໃນ ສປປ ລາວ

- ໃນ ສປປ ລາວ, ມີເດັກຍິງໄວໜຸ່ມຈຳນວນ **700,230** ຄົນ ທີ່ມີອາຍຸລະຫວ່າງ 10-19 ປີ*
- ມີການຄາດຄະເນວ່າ **29%** ຂອງເດັກຍິງທີ່ມີອາຍຸລະຫວ່າງ 10-19 ປີ ແມ່ນເປັນກຸ່ມທີ່ຢູ່ໃນຄວາມສ່ຽງຫຼາຍທີ່ສຸດ.
- ໄວໜຸ່ມຍິງ **1** ໃນ **20** ຄົນ ບໍ່ໄດ້ເຂົ້າໂຮງຮຽນ.
- ໄວໜຸ່ມຍິງ **1** ໃນ **5** ຄົນ ໄດ້ອອກໂຮງຮຽນ.
- ໄວໜຸ່ມຍິງ ອາຍຸ 15-19 ປີ **1** ໃນ **5** ຄົນ ແມ່ນແຕ່ງງານແລ້ວ.
- ໄວໜຸ່ມຍິງ ອາຍຸ 15-19 ປີ **1** ໃນ **10** ຄົນ ໄດ້ເລີ່ມມີລູກແລ້ວ.



# ຄຳໝັ້ນສັນຍາຕໍ່ກອງປະຊຸມສຸດຍອດ ICPD 25 ທີ່ ນະຄອນຫຼວງໄນໂຣບີ ຂອງລັດຖະບານແຫ່ງ ສປປ ລາວ

**ເນື່ອງໃນໂອກາດຄົບຮອບ 25 ປີຂອງກອງປະຊຸມສາກົນວ່າດ້ວຍປະຊາກອນ ແລະ ການພັດທະນາ ຫຼື (ICPD), ລັດຖະບານແຫ່ງ ສປປ ລາວໄດ້ໃຫ້ຄຳໝັ້ນສັນຍາ 7 ຂໍ້ຕໍ່ກອງປະຊຸມທີ່ນະຄອນຫຼວງໄນໂຣບີໃນເດືອນ ພະຈິກ 2019 ຄື:**

**1.** ນຳໃຊ້ຕົວເລກຂໍ້ມູນດ້ານປະຊາກອນເຂົ້າໃນແຜນການພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ 9 ແລະ ນຳໃຊ້ການສຶກສາຄົ້ນຄ້ວາ ປະເທດລາວ 2030 ກ່ຽວກັບການປ່ຽນແປງໂຄງສ້າງປະຊາກອນ ເພື່ອຮັບປະກັນການຕອບສະໜອງຕາມຄວາມຕ້ອງການທີ່ກຳລັງເກີດຂຶ້ນຂອງປະຊາກອນ.

**2.** ຮອດປີ 2030, ຢຸດຕິອັດຕາການຕາຍຂອງແມ່.

**3.** ຢຸດຕິ ຄວາມຕ້ອງການໃນການວາງແຜນຄອບຄົວແຕ່ບໍ່ໄດ້ຮັບການສະໜອງໃນກຸ່ມເຍົາວະຊົນເພດຍິງ ໃນປີ 2030.

**4.** ຮອດປີ 2030, ສິ້ນສຸດຄວາມຮຸນແຮງບົນພື້ນຖານທາງເພດ (GBV) ແລະ ການກະທຳທີ່ເປັນອັນຕະລາຍ, ໂດຍສຸມໃສ່ບັນຫາການແຕ່ງດອງໃນອາຍຸຍັງນ້ອຍ.

**5.** ຮອດປີ 2030, ເອົາເພດສຶກສາແບບຄົບຖ້ວນເຂົ້າໃນຫຼັກສູດໂຮງຮຽນໃນທົ່ວປະເທດ.

**6.** ໃຫ້ສຳເລັດ ແລະ ຈັດຕັ້ງປະຕິບັດນະໂຍບາຍແຫ່ງຊາດວ່າດ້ວຍປະຊາກອນ ແລະ ການພັດທະນາ, ນະໂຍບາຍແຫ່ງຊາດວ່າດ້ວຍຊາວໜຸ່ມ ແລະ ເຍົາວະຊົນ, ແລະ ກົດໝາຍວ່າດ້ວຍຊາວໜຸ່ມ ພ້ອມດ້ວຍຂໍ້ກຳນົດດ້ານນະໂຍບາຍທີ່ມີນະວັດຕະກຳໃໝ່ທີ່ເໝາະສົມທາງກົດໝາຍ.

**7.** ເພີ່ມທະວີການລົງທຶນໃສ່ເຍົາວະຊົນ ແລະ ຊາວໜຸ່ມ, ໂດຍສະເພາະແມ່ນແມ່ຍິງໜຸ່ມໂດຍຜ່ານແຜນງານ “ນາງນ້ອຍ” ແລະ "ລະບົບນິເວດຂອງນາງນ້ອຍ" ແລະ ປັບດັດການລົງທຶນຕ່າງໆ ເພື່ອໃຫ້ໄດ້ຮັບຜົນປະໂຫຍດຈາກປະຊາກອນໜຸ່ມ.

ICPD25
International Conference on
Population and Development

# ທ່ານສາມາດຊ່ວຍເຫຼືອນາງນ້ອຍໄດ້ແນວໃດ?

ນາງນ້ອຍເປັນໄວໜຸ່ມຍິງທີ່ມີທ່າແຮງໃນການພັດທະນາທາງດ້ານຄວາມຮູ້ ແລະສະຕິປັນຍາ ຈາກຜູ້ຄົນອ້ອມຂ້າງລາວ ເຊິ່ງໃນມື້ໜຶ່ງລາວອາດກາຍເປັນຜູ້ນຳທີ່ສາມາດໃນການສ້າງແຮງບັນດານໃຈ, ເປັນບຸກຄະລະກອນທີ່ມີຄຸນະພາບ, ເປັນຜູ້ສ້າງນະວັດຕະກຳ, ເປັນຜູ້ປົກຄອງທີ່ເອົາໃຈໃສ່ ຫຼື ເປັນໃນສິ່ງທີ່ລາວຢາກເປັນ.

ຄວາມພະຍາຍາມທີ່ເປັນຈຸດສຸມລວມ ແລະ ການລົງທຶນທີ່ເພີ່ມຂຶ້ນແມ່ນເປັນສິ່ງທີ່ຈຳເປັນໃນການສ້າງສະພາບແວດລ້ອມທີ່ແທດເໝາະໃຫ້ກັບນາງນ້ອຍສາມາດກ້າວຂຶ້ນໄປ ແລະ ບັນລຸໝາກຜົນຂອງການພັດທະນາແບບຍືນຍົງ(SDGs)ໃນ ສປປ ລາວ

ການລົງທຶນເຂົ້າໃນຂະແໜງເສດຖະກິດ-ສັງຄົມເພື່ອສຸຂະພາບ ແລະ ການເປັນຢູ່ຂອງໄວໜຸ່ມແມ່ນເປັນການລົງທຶນທີ່ດີທີ່ສຸດ ແລະ ສາມາດປະຕິບັດເພື່ອໃຫ້ບັນລຸເປົ້າໝາຍການພັດທະນາແບບຍືນຍົງ(SDGs)ໃນ ສປປ ລາວ.

- ເພີ່ມການຮຽນອີກໜຶ່ງປີສຳລັບເພດຍິງ ແມ່ນສາມາດຫຼຸດຜ່ອນອັດຕາການເກີດທີ່ 5-10%.
- ເພີ່ມການລົງທຶນ 1% ໃນການເຮັດໃຫ້ເດັກຍິງ ແລະ ເພດຍິງຈົບການສຶກສາຂັ້ນມັດທະຍົມ ແມ່ນສາມາດເພີ່ມລາຍຮັບສະເລ່ຍຕໍ່ຫົວຄົນທີ່ 0.3 ສ່ວນຮ້ອຍ. (ແຫຼ່ງຂໍ້ມູນ: ທະນາຄານໂລກ)
- ການໃຊ້ຈ່າຍ 1 ໂດລາສະຫະລັດໃນການຄຸມກຳເນີດ ສຳລັບໄວໜຸ່ມໃນ ສປປ ລາວ ສາມາດຫຼຸດຜ່ອນຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບການຖືພາທີ່ 7 ໂດລາສະຫະລັດ ແລະ ສາມາດໃຫ້ຜົນຕອບຮັບໃນທາງອ້ອມແກ່ສັງຄົມສູງເຖິງ 120 ໂດລາສະຫະລັດໃນທຸກໆ 1 ໂດລາສະຫະລັດ ທີ່ມີການລົງທຶນ. (ແຫຼ່ງຂໍ້ມູນ: UNFPA)

## ຕົວຢ່າງຄ່າໃຊ້ຈ່າຍໃນການມີສ່ວນຮ່ວມ

**300 ໂດລາສະຫະລັດ**
ໃນການສອນທັກສະຊີວິດ 1 ປີ

**362 ໂດລາສະຫະລັດ**
ໃນການສ້າງຄວາມສາມາດໃຫ້ຄູ 1 ຄົນ ທີ່ສາມາດຊ່ວຍເຫຼືອຂ້ອຍ ແລະ ໄວໜຸ່ມອີກ 115 ຄົນ ພາຍໃນ 1 ປີ

**3,000 ໂດລາສະຫະລັດ**
ໃນການຝຶກອົບຮົມແພດຜະດຸງຄັນ ທີ່ສາມາດໃຫ້ການຊ່ວຍເຫຼືອແມ່ຍິງ ໃນໄວຈະເລີນພັນຈຳນວນ 1,003 ຄົນຕໍ່ປີ



**1,265 ໂດລາສະຫະລັດ**
ເພື່ອເຜີຍແຜ່ຂໍ້ມູນຂ່າວສານ ແລະ ເຂົ້າເຖິງຊຸມຊົນທີ່ຢູ່ໃນຄວາມສ່ຽງ ທີ່ໃຊ້ເວລາເຄິ່ງວັນ ສອງຄັ້ງ

**500 ໂດລາສະຫະລັດ**
ໃນການສ້າງຄວາມສາມາດຂອງຜູ້ໃຫ້ບໍລິການສາທາລະນະສຸກ ທີ່ສາມາດໃຫ້ການຊ່ວຍເຫຼືອໄວໜຸ່ມຈຳນວນ 3,100 ຄົນຕໍ່ປີ.

ອັບເດດ: 01 ພະຈິກ 2020

# ກອບແຜນງານນາງນ້ອຍປີ 2030

## ເພື່ອບັນລຸຄວາມສະເໝີພາບ ລະຫວ່າງ ຍິງ-ຊາຍ ແລະ ສ້າງຄວາມເຂັ້ມແຂງໃຫ້ກັບໄວໜຸ່ມຍິງ

ນ້ອຍເປັນຕົວແທນໃຫ້ໄວໜຸ່ມຍິງ ທີ່ມີອາຍຸ 10-19 ປີ ຈຳນວນ 700,230ຄົນ ໃນ ສ ປ ປ ລາວ. ** ຂໍ້ຄົງຄ້າງຈາກເປົ້າໝາຍການພັດທະນາສາຫະສະວັດໄດ້ເຮັດໃຫ້ໄວໜຸ່ມຍິງຖືກປ່ອຍປະໄວ້ທາງຫຼັງ. ດັ່ງນັ້ນ, ເປົ້າໝາຍການພັດທະນາແບບຍືນຍົງ ເພື່ອຮັບປະກັນບໍ່ປ່ອຍປະຜູ້ໃດໄວ້ຂ້າງຫຼັງ.

ນ້ອຍຖືກສ້າງຂຶ້ນເພື່ອປູກຈິດສຳນຶກ, ສ້າງຄວາມເຂັ້ມແຂງໃນການຮ່ວມມື ແລະ ເພີ່ມທະວີການລົງທຶນພັດທະນາໄວໜຸ່ມຍິງ ເພື່ອໃຫ້ເຂົາເຈົ້າບັນລຸເປົ້າໝາຍຕາມທ່າແຮງທີ່ເໝາະສົມ. ຂອບແຜນງານນາງນ້ອຍຖືກນຳສະເໜີຢ່າງເປັນທາງການໃນວັນເດັກຍິງສາກົນ ປີ 2016.

### ເປົ້າໝາຍ 2:

ຍ້ອນຂາດໂພຊະນາການທີ່ດີ, **ໄວໜຸ່ມຍິງ ອາຍຸ 15-19* ປີ ເປັນພະຍາດ ເລືອດຈາງ ຈຳນວນ 42.6%**

### ເປົ້າໝາຍ 3:

ອັດຕາການເກີດລູກໃນໄວໜຸ່ມ ແມ່ນສູງທີ່ສຸດໃນພາກພື້ນ. **83 ຕໍ່ 1,000 ຄົນ** ແລະ ເພີ່ມຄວາມສ່ຽງຕໍ່ການຕາຍຂອງແມ່.

### ເປົ້າໝາຍ 4:

**ໄວໜຸ່ມຍິງ ອາຍຸ 15-17 ປີ ຈຳນວນ 41.8% * ໄດ້ອອກໂຮງຮຽນ** ເຂົາເຈົ້າຂາດໂອກາດໄດ້ຮັບການພັດທະນາທາງດ້ານ ເສດຖະກິດ ແລະ ສັງຄົມ




### ເປົ້າໝາຍ 8:

ຍ້ອນຂາດການປົກປ້ອງທາງສັງຄົມ, **ໄວໜຸ່ມຍິງ ອາຍຸ 5 -17 ປີ ໄດ້ມີສ່ວນຮ່ວມເປັນແຮງງານເດັກ ຈຳນວນ 42.4% ***

### ເປົ້າໝາຍ 5:

**ການແຕ່ງງານແຕ່ອາຍຸຍັງນ້ອຍຂອງໄວໜຸ່ມຍິງ ອາຍຸ 15- 19 ປີມີເຖິງ 23.5%. ***

ຄວາມຄືບໜ້າການຈັດຕັ້ງປະຕິບັດແຜນງານ ນາງນ້ອຍຈະໄດ້ຕິດຕາມຢ່າງໃກ້ຊິດຈາກ 5 ຕົວຊີ້ວັດຂອງເປົ້າໝາຍການພັດທະນາແບບຍືນຍົງຮອດ 2030 ນາງນ້ອຍຈະມີອາຍຸ 25 ປີ. ຈະໄດ້ນຳໃຊ້ຂໍ້ມູນຈາກຜົນການສຳຫຼວດປະຊາກອນທຸກໆ 5 ປີ.

ມີແຜນງານ ແລະ ວິທີການຈັດຕັ້ງປະຕິບັດທີ່ຮອບດ້ານ ເພື່ອແກ້ໄຂອຸປະສັກທີ່ກີດຂວາງ ນາງນ້ອຍກຳລັງປະເຊີນຢູ່ນັ້ນໃຫ້ໝົດໄປ ຈະຊ່ວຍໃຫ້ມີຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ (SDGs) ແລະ ຫຼຸດພົ້ນອອກຈາກວົງຈອນຄວາມທຸກຍາກ ຊຶ່ງຈະນຳຜົນປະໂຫຍດມາສູ່ນາງນ້ອຍ, ຊຸມຊົນ ແລະ ປະເທດລາວ.

* ການສຳຫຼວດດັດສະນີໝາຍສັງຄົມລາວ 2017

** ການສຳຫຼວດປະຊາກອນ 2015

# ລະບົບນິເວດສຳລັບ "ນາງນ້ອຍ"

**ຜົນທີ່ໄດ້ຮັບ:** ສປປ ລາວ ໃຫ້ຄວາມສຳຄັນໃນການລົງທຶນ ແລະ ພັດທະນາປະຊາກອນໜຸ່ມ ເພື່ອບັນລຸເປົ້າໝາຍ ການພັດທະນາແບບຍືນຍົງ. ຫຼຸດຜ່ອນອັດຕາການຖືພາຂອງໄວໜຸ່ມ ແລະ ອັດຕາການຕາຍຂອງແມ່.

**"ນາງ ນ້ອຍ":** ສາມາດຖືພາເມື່ອ ມີຄວາມພ້ອມ, ໄດ້ພັດທະນາຕົນເອງ, ມີສຸຂະພາບແຂງແຮງ, ໄດ້ຮັບການສຶກສາ, ມີຄວາມສາມາດ ແລະ ມີວຽກເຮັດງານທຳທີ່ດີ.




预览已结束，完整报告链接和二维码如下：
https://www.yunbaogao.cn/report/index/report?reportId=5_19717